ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== 000 ===-------

12160

ກະຊວງການເງິນ ເລກທີ /ກງ

ນະຄອນຫຼວງວຽງຈັນ, ວັນທີ 07 SEP 2007

# ຄຳແນະນຳ

# ຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍການຫັນວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ໄປສູ່ການຄຸ້ມຄອງລວມສູນຕາມສາຍຕັ້ງ

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດວ້ຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 35/ນຍ, ລົງວັນທີ 06 ກັນຍາ 2007 ວ່າດ້ວຍການຫັນວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ລວມສູນຕາມສາຍຕັ້ງຂຶ້ນໂດຍກົງກັບກະຊວງການເງິນ.

ເພື່ອເປັນການຮັບປະກັນໃຫ້ແກ່ການປັບປຸງກົງຈັກການຈັດຕັ້ງ, ການຄຸ້ມຄອງບຸກຄະລາກອນ ແລະ ງົບປະມານຮັບໃຊ້ໃຫ້ແກ່ການຫັນເປັນສາຍຕັ້ງຂອງວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ໃຫ້ແທດເຖິງ, ສອດຄ່ອງກັບກົນໄກການຄຸ້ມຄອງລວມສູນຕາມສາຍຕັ້ງ ແລະ ກົນໄກການປະສານງານລະຫວ່າງ ສູນກາງ ແລະ ທ້ອງຖິ່ນ;

## ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ ດັ່ງຕໍ່ໄປນີ້:

## I. ກ່ຽວກັບເນື້ອໃນວຽກງານຄຸ້ມຄອງລວມສູນຕາມສາຍຕັ້ງ.

### 1. ການຄຸ້ມຄອງ.

ການຫັນໄປສູ່ການຄຸ້ມຄອງລວມສູນຕາມສາຍຕັ້ງຂອງວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ (ຕໍ່ໄປນີ້ເອີ້ນວ່າ: ສາມສາຍຕັ້ງ) ແມ່ນການປັບປຸງດ້ານພາລະບົດບາດ, ໜ້າທີ່, ໂຄງປະກອບກົງຈັກການຈັດຕັ້ງ, ບຸກຄະລາກອນ ແລະ ແບບແຜນວິທີເຮັດວຽກຄືນໃໝ່, ກຳນົດແຈ້ງຕື່ມໜ້າທີ່ ແລະ ຄວາມຮັບຜິດຊອບຄຸ້ມຄອງ ລະຫວ່າງກະຊວງການເງິນ ກັບອົງການປົກຄອງທ້ອງຖິ່ນ ຕໍ່ສາມສາຍຕັ້ງໃຫ້ຈະແຈ້ງໂດຍແບ່ງຄວາມຮັບຜິດຊອບ, ຂອບເຂດສິດໃນການຊີ້ນຳນຳພາ ແລະ ຕິກລົງບັນຫາຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 35/ນຍ, ລົງວັນທີ 06 ກັນຍາ 2007 ຄືດັ່ງນີ້:

- ກະຊວງການເງິນ ມີຄວາມຮັບຜິດຊອບ ແລະ ມີສິດຕົກລົງກ່ຽວກັບວຽກງານກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ, ວຽກງານວິຊາສະເພາະ, ງົບປະມານ ແລະ ພາຫະນະວັດຖຸອຸປະກອນຕ່າງໆ ເພື່ອຮັບໃຊ້ຕາມພາລະບົດບາດສິດ ແລະ ໜ້າທີ່ ທີ່ລະບຽບກົດໝາຍໄດ້ກຳນົດໄວ້.

- ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບດ້ານຊີວິດການເມືອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ອໍານວຍຄວາມສະດວກໃຫ້ແກ່ການປະຕິບັດວຽກງານວິຊາສະເພາະຂອງພະນັກງານໃຫ້ມີຄວາມຄ່ອງຕົວ, ມີປະສິດທິພາບ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

## 2. ໂຄງປະກອບກົງຈັກການຈັດຕັ້ງ.

ໂດຍອີງໃສ່ຈຸດພິເສດທີ່ແຕກຕ່າງກັນຂອງວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ, ກົງຈັກຈັດຕັ້ງຂອງສາມສາຍຕັ້ງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໄດ້ກຳນົດໄວ້ໃນດຳລັດຂອງນາຍົກລັດຖະມົນຕີ ເລກທີ 80/ນຍ, ລົງວັນທີ 28/02/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ແລະ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສາມສາຍຕັ້ງ ດັ່ງນີ້:

- **ຂັ້ນສູນກາງ:** ປະກອບມີ ກົມພາສີ, ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ;
- **ຂັ້ນທ້ອງຖິ່ນ:**
  + ກົງຈັກການຈັດຕັ້ງພາສີ ປະກອບມີພາສີປະຈຳເຂດ, ດ່ານພາສີຊາຍແດນ, ໜ່ວຍພາສີເຄື່ອນທີ່ ແລະ ປ້ອມພາສີ;
  + ສ່ວຍສາອາກອນ ປະກອບມີສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ; ສ່ວຍສາອາກອນປະຈຳເມືອງ ຫຼື ເທດສະບານ;
  + ຄັງເງິນແຫ່ງຊາດ ປະກອບມີຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ; ຄັງເງິນແຫ່ງຊາດປະຈຳເມືອງ ຫຼື ເທດສະບານ.

ໃນພາກປະຕິບັດຕົວຈິງ ການປັບປຸງກົງຈັກການຈັດຕັ້ງຂອງສາມສາຍຕັ້ງ ຕ້ອງອີງຕາມເງື່ອນໄຂ ແລະ ປັດໃຈຄວາມພ້ອມຂອງແຕ່ລະທ້ອງຖິ່ນ. ບ່ອນທີ່ມີເງື່ອນໄຂຄົບຖ້ວນ ກໍໃຫ້ປັບປຸງກົງຈັກການຈັດຕັ້ງຄົບຖ້ວນຕາມ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສາມສາຍຕັ້ງ. ສ່ວນບ່ອນທີ່ບໍ່ທັນມີເງື່ອນໄຂຄົບຖ້ວນໃນສະເພາະໜ້ານີ້ ໃຫ້ຮັກສາຮູບແບບກົງຈັກການຈັດຕັ້ງທີ່ມີໃນປະຈຸບັນນີ້ໄວ້ຊົ່ວຄາວກ່ອນ. ແຕ່ການຊີ້ນຳ ແລະ ຄຸ້ມຄອງວຽກງານວິຊາສະເພາະ, ບຸກຄະລາກອນ ແລະ ຄັງເງິນເດືອນ, ເງິນອຸດໜູນ ໃຫ້ຂຶ້ນລວມສູນຕາມສາຍຕັ້ງ, ໝາຍຄວາມວ່າ ຂຶ້ນກັບກະຊວງການເງິນໂດຍກົງ.

## 3. ການຄຸ້ມຄອງພະນັກງານ:

- ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ປະກອບມີພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການ ຊຶ່ງບັນຈຸ, ສັບຊ້ອນຕາມຕຳແໜ່ງງານຕ່າງໆ ທີ່ໄດ້ກຳນົດ. ພະນັກງານ-ລັດຖະກອນຕ່າງໆ ເຫຼົ່ານີ້ ຢູ່ພາຍໃຕ້ການຄຸ້ມຄອງ, ແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ປົດຕຳແໜ່ງ, ປະຕິບັດວິໄນ, ຍ້ອງຍໍ ແລະ ອື່ນໆໂດຍກົງ ຈາກກະຊວງການເງິນ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນຢ່າງລະອຽດ ແລະ ຖີ່ຖ້ວນ ຕາມລະບຽບກົດໝາຍກຳນົດ.

- ການຂຶ້ນບັນຊີລັດຖະກອນແມ່ນໃຫ້ຖືເອົາຕາມບັນຊີຈຳນວນພົນ ແລະ ຄັງເງິນເດືອນງວດ 3 ສົກປີ 2006-2007 ເປັນພື້ນຖານ, ລາຍລະອຽດໄດ້ລະບຸໄວ້ໃນແຈ້ງການແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1446/ກງ, ລົງວັນທີ 26/6/2007.

4. ງົບປະມານ:

ຫັນເອົາວຽກງົບປະມານການເງິນ ແລະ ການຄຸ້ມຄອງວັດຖຸ-ອຸປະກອນ ລວມທັງພາຫະນະຮັບໃຊ້ວຽກງານວິຊາສະເພາະຕ່າງໆ ນັບທັງການສ້າງແຜນການ, ການຄຸ້ມຄອງນຳໃຊ້ ແລະ ການສະຫລຸບລາຍງານ ແມ່ນໃຫ້ລວມສູນຂຶ້ນຕາມຂະແໜງການສາຍຕັ້ງ, ຊຶ່ງໃນນັ້ນ ລວມທັງບັນຊີຄັງເງິນເດືອນ, ເງິນນະໂຍບາຍ, ເງິນຮັບໃຊ້ວຽກບໍລິຫານ, ດັດສົມສິ່ງເສີມວິຊາການ ແລະ ເງິນລົງທຶນຂອງລັດຕາມລະບຽບກົດໝາຍໄດ້ກຳນົດໄວ້.

ສຳລັບ ສົກປີ 2007-2008 ນີ້ ງົບປະມານບໍລິຫານ, ດັດສົມສິ່ງເສີມ ແລະ ອື່ນໆ ຂອງສາມສາຍຕັ້ງຢູ່ຂັ້ນທ້ອງຖິ່ນ ແມ່ນໃຫ້ນຳໃຊ້ງົບປະມານລວມທີ່ແບ່ງໃຫ້ພະແນກການເງິນແຕ່ລະທ້ອງຖິ່ນ. ສຳລັບທ້ອງຖິ່ນໃດທີ່ມີເງື່ອນໄຂຄົບຖ້ວນ ໃນການທົດລອງແຍກອອກເປັນສາຍຕັ້ງທີ່ເຕັມຮູບແບບນັ້ນ, ແມ່ນໃຫ້ພະແນກການເງິນແຂວງ, ນະຄອນຫຼວງ ແບ່ງງົບປະມານບໍລິຫານ, ດັດສົມສິ່ງເສີມ ແລະ ພາຫະນະອຸປະກອນທີ່ຈຳ ເປັນໃຫ້ແກ່ສາມສາຍຕັ້ງຢ່າງເໝາະສົມ. ສຳລັບທ້ອງຖິ່ນທີ່ບໍ່ທັນມີເງື່ອນໄຂຄົບຖ້ວນ ເພື່ອເຮັດທົດລອງຕາມທີ່ໄດ້ ກຳນົດໄວ້ໃນຄຳແນະນຳສະບັບນີ້ ກໍໃຫ້ນຳໃຊ້ງົບປະມານບໍລິຫານ, ດັດສົມສິ່ງເສີມ ແລະ ພາຫະນະອຸປະກອນຕ່າງໆ ຮ່ວມກັບພະແນກການເງິນຂອງທ້ອງຖິ່ນນັ້ນ. ສຳລັບເງິນເດືອນ, ເງິນນະໂຍບາຍຂອງສາມສາຍຕັ້ງໃນສົກປີ 2007-2008 ນີ້ ທາງກະຊວງການເງິນ ຈະໄດ້ຄິດໄລ່ລະອຽດຈຳນວນພົນພ້ອມຄັງເງິນເດືອນ, ເງິນນະໂຍບາຍຂອງ ແຕ່ລະພາກສ່ວນສາຍຕັ້ງ ແລ້ວອາດຈະໂອນຕົວເລກງົບປະມານ ໃຫ້ທ້ອງຖິ່ນເປັນຜູ້ເບີກຈ່າຍຕົວຈິງ, ໂດຍແບ່ງເອົາຈາກຕົວເລກຄັງເງິນເດືອນລວມຂອງພະແນກການເງິນແຂວງ, ຫ້ອງການການເງິນເມືອງ.

## II. ວິທີການ, ຂັ້ນຕອນ ແລະ ບາດກ້າວການຫັນເປັນສາຍຕັ້ງ.

### 1. ວິທີການ:

- ການຫັນວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ໄປສູ່ການຄຸ້ມຄອງແບບລວມສູນຕາມສາຍຕັ້ງຈະໄດ້ດຳເນີນໄປເປັນເວລາ 3 ປີ, ໂດຍແບ່ງເປັນ 3 ບາດກ້າວ ຄື:

  + **ບາດກ້າວທີໜຶ່ງ**: ເປັນບາດກ້າວເຮັດທົດລອງຢ່າງມີຈຸດສຸມ ໂດຍຈະເລີ່ມປະຕິບັດແຕ່ວັນທີ 1/10/2007 ຮອດວັນທີ 30/09/2008,
  + **ບາດກ້າວທີສອງ**: ແມ່ນບາດກ້າວຜັນຂະຫຍາຍ ໂດຍຈະເລີ່ມແຕ່ວັນທີ 1/10/2008 ຮອດວັນທີ 30/09/2009,
  + **ບາດກ້າວທີສາມ**: ແມ່ນບາດກ້າວສືບຕໍ່ຜັນຂະຫຍາຍໃຫ້ສຳເລັດ ໂດຍຈະເລີ່ມແຕ່ວັນທີ 1/10/2009 ຮອດວັນທີ 30/09/2010.

- ການຫັນໄປສູ່ການຄຸ້ມຄອງຕາມສາຍຕັ້ງ ໃຫ້ດຳເນີນຢ່າງມີຈຸດສຸມ, ໂດຍເລືອກເຟັ້ນບ່ອນທີ່ມີເງື່ອນໄຂຄົບຖ້ວນເປັນເປົ້າໝາຍເຮັດທົດລອງໃນບາດກ້າວທີໜຶ່ງ. ພາຍຫຼັງດຳເນີນການຫັນໄລຍະໜຶ່ງແລ້ວ ໃຫ້ສະຫຼຸບຖອດຖອນບົດຮຽນ, ຈາກນັ້ນ ຈຶ່ງຜັນຂະຫຍາຍໃຫ້ກ້ວາງອອກໃນບາດກ້າວຕໍ່ໄປ.

- ການຫັນໄປສູ່ສາຍຕັ້ງໃຫ້ເລີ່ມຕົ້ນດ້ວຍການວາງແຜນ, ເກັບກຳຂໍ້ມູນດ້ານຕ່າງໆ ຢ່າງລະອຽດຈະແຈ້ງ, ຈາກນັ້ນ ຈຶ່ງດຳເນີນການຫັນຕົວຈິງ, ໂດຍເລີ່ມຕົ້ນຈາກການຈັດກອງປະຊຸມເປີດບັ້ນດຳເນີນຊີວິດການເມືອງ, ປັບປຸງກົງຈັກການຈັດຕັ້ງ ແລະ ຄົ້ນຄ້ວາເປົ້າໝາຍບຸກຄະລະກອນ ປະກອບເຂົ້າໃສ່ຕຳແໜ່ງງານຕ່າງໆ ຕາມພາລະບົດບາດໄດ້ກຳນົດ; ພ້ອມດຽວກັນນັ້ນ ກໍຕ້ອງໄດ້ນຳພາການເມືອງແນວຄິດໃຫ້ແກ່ພະນັກງານ-ລັດຖະກອນທົ່ວຂະແໜງການເງິນ ແລະ ບັນດາພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ, ເມືອງ ຫຼື ເທດສະບານ ເພື່ອສ້າງ

ຄວາມຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງກ່ຽວກັບຄວາມຮຽກຮ້ອງຕ້ອງການ ແລະ ຄວາມຈຳເປັນຂອງການທັນສາມພາກສ່ວນໄປສູ່ການຄຸ້ມຄອງລວມສູນຕາມສາຍຕັ້ງ.

- ຫລັງຈາກນັ້ນໃຫ້ ຈັດພິທີເຊັນເອກະສານຕ່າງໆ ທີ່ກ່ຽວຂ້ອງກັບທັນສາມສາຍຕັ້ງ ໂດຍມີຜູ້ຕາງໜ້າຂອງກະຊວງການເງິນ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

- ພາຍຫຼັງເລີ່ມຕົ້ນປະຕິບັດບາດກ້າວທີ່ 1 ໄດ້ໄລຍະໜຶ່ງແລ້ວ (ອາດຈະແມ່ນ 6 ເດືອນ), ໃຫ້ພາກສ່ວນສາມສາຍຕັ້ງ ສະຫຼຸບຖອດຖອນບົດຮຽນໂດຍມີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຜູ້ຕາງໜ້າທີ່ຖືກມອບໝາຍ ແລະ ມີຜູ້ຕາງໜ້າຈາກພະແນກການ, ຫ້ອງການອ້ອມຂ້າງແຂວງ ແລະ ເມືອງເຂົ້າຮ່ວມນຳ; ໂດຍໃຫ້ຜູ້ຕາງໜ້າສາມສາຍຕັ້ງ ຜ່ານບົດສະຫຼຸບຕີລາຄາສະພາບທີ່ຜ່ານມາ ໂດຍສົມທຽບໃສ່ກ່ອນການທັນເປັນສາຍຕັ້ງວ່າມີອັນປ່ຽນແປງດ້ານຕັ້ງໜ້າ ແລະ ມີບັນຫາຫຍຸ້ງຍາກຄືແນວໃດ. ຈາກນັ້ນ ກໍພ້ອມກັນ ຄົ້ນຄວ້າວາງທິດທາງແຜນການສືບຕໍ່ປະຕິບັດໃນບາດກ້າວທີ 2 ແລະ ທີ 3 ໃຫ້ສຳເລັດຕາມກຳນົດເວລາທີ່ວາງໄວ້.

2. ການກະກຽມ.

(1) ດ້ານການຈັດຕັ້ງ:

ກະຊວງການເງິນ ສົມທົບກັບອົງການປົກຄອງທ້ອງຖິ່ນຂັ້ນແຂວງ ຈັດຕັ້ງຄະນະຮັບຜິດຊອບວຽກງານທັນສາມສາຍຕັ້ງ ຂຶ້ນໂດຍຈັດຕັ້ງບັນດາໜ່ວຍງານຊ່ວຍວຽກແຕ່ລະດ້ານ ເຊັ່ນ: ດ້ານກົງຈັກການຈັດຕັ້ງ, ດ້ານບຸກຄະລາກອນ, ດ້ານ ການເງິນ-ງົບປະມານ ແລະ ອື່ນໆ, ຊຶ່ງແຕ່ລະໜ່ວຍງານມີໜ້າທີ່ ດັ່ງລຸ່ມນີ້:

- **ໜ່ວຍງານປັບປຸງກົງຈັກການຈັດຕັ້ງ**: ຄົ້ນຄວ້າກຳນົດພາລະບົດບາດ, ໜ້າທີ່ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງສາມສາຍຕັ້ງຢ່າງລະອຽດ ແຕ່ຂັ້ນສູນກາງລົງຮອດຂັ້ນແຂວງ, ນະຄອນຫຼວງ ແລະ ເມືອງ ຫຼື ເທດສະບານ;
- **ໜ່ວຍງານບຸກຄະລາກອນ**: ຄົ້ນຄວ້າກຳນົດມາດຕະຖານ, ເງື່ອນໄຂຂອງພະນັກງານ-ລັດຖະກອນ ທີ່ບັນຈຸສັບຊ້ອນເຂົ້າແຕ່ລະຕຳແໜ່ງງານ ແລະ ສະຫລຸບສັງລວມຈຳນວນພະນັກງານ-ລັດຖະກອນ ທັງໝົດຂອງສາມສາຍຕັ້ງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; ຄົ້ນຄວ້າແຜນຈັດວາງບຸກຄະລາກອນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສະເໜີລັດຖະມົນຕີວ່າການກະຊວງການເງິນ ສົມທົບກັບເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລະ ຕົກລົງ;
- **ໜ່ວຍງານການເງິນ-ງົບປະມານ**: ສະຫຼຸບສັງລວມທັງໝົດກ່ຽວກັບການເງິນງົບປະມານ, ພາຫະນະ, ອຸປະກອນ ແລະ ເຄື່ອງມືຮັບໃຊ້ທີ່ຈຳເປັນຕ່າງໆ ຂອງສາມສາຍຕັ້ງໃນທົ່ວປະເທດ; ສ້າງແຜນການ ແລະ ຈັດຕັ້ງປະຕິບັດການແບ່ງປັນວັດຖຸສິ່ງຂອງ ຫຼື ປະກອບໃຫ້ແຕ່ລະການຈັດຕັ້ງ ທີ່ກ່ຽວຂ້ອງຢ່າງເໝາະສົມ, ຮັບປະກັນໃຫ້ມີຄວາມສະຫງົບ ແລະ ຮັກສາຄວາມສາມັກຄີ, ຫຼີກເວັ້ນການຕົກເຮ່ຍເສຍຫາຍ ຫຼື ການໃຊ້ຈ່າຍຟູມເຟືອຍຕ່າງໆ;
- **ໜ່ວຍງານກອງເລຂາ**: ມີໜ້າທີ່ກະກຽມເອກະສານຕ່າງໆ ສຳລັບເຊັນບົດບັນທຶກ ກ່ຽວກັບການທັນສາມສາຍຕັ້ງ; ເຮັດບົດສະຫຼຸບລາຍງານຊ່ວຍຄະນະຮັບຜິດຊອບ ແລະ ເຮັດໜ້າທີ່ພົວພັນ, ປະສານງານກັບໜ່ວຍງານຕ່າງໆ.

(2). ດ້ານນິຕິກຳ:

ໃຫ້ພາກສ່ວນກ່ຽວຂ້ອງ ກະກຽມບັນດາເອກະສານຕ່າງໆ ທາງດ້ານນິຕິກຳ ດັ່ງລຸ່ມນີ້:

- ສ້າງ ແລະ ປັບປຸງພາລະບົດບາດຂອງສາມສາຍຕັ້ງ, ພະແນກການເງິນແຂວງ, ນະຄອນຫຼວງ ແລະ ບັນດາກົມອ້ອມຂ້າງກະຊວງທີ່ເຫັນວ່າບໍ່ສອດຄ່ອງໃນໄລຍະຜ່ານມາ.

- ຮ່າງພາລະບົດບາດ, ໜ້າທີ່ຂອງພະແນກການ ແລະ ໜ່ວຍງານຕ່າງໆ ຂອງກົມພາສີ, ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ພ້ອມທັງພາລະບົດບາດຂອງຂະແໜງ ແລະ ໜ່ວຍງານຕ່າງໆ ຂອງສາມສາຍຕັ້ງປະຈຳຢູ່ທ້ອງຖິ່ນ.

- ຮ່າງລະບຽບການສັບຊ້ອນໝູນວຽນພະນັກງານສາມສາຍຕັ້ງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ເປັນເອກະພາບໃນທົ່ວປະເທດ.

- ຮ່າງກົດລະບຽບພາຍໃນ ແລະ ຂໍ້ຫ້າມສະເພາະຂອງລັດຖະກອນພາສີ ແລະ ສ່ວຍສາອາກອນ.

- ປັບປຸງກົນໄກແບບແຜນວິທີເຮັດວຽກຂອງສາມສາຍຕັ້ງ ແລະ ຄົ້ນຄວ້າ, ສ້າງລະບຽບການ ແລະ ກົນໄກການພົວພັນກັບບັນດາຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ.

- ຮ່າງລະບຽບການເບີກຈ່າຍເງິນເດືອນ, ເງິນນະໂຍບາຍ, ເງິນບໍລິຫານ ແລະ ອື່ນໆ ຂອງສາມສາຍຕັ້ງ ແລະ ລະບຽບການຄຸ້ມຄອງຄັງວິຊາການພາສີ ແລະ ສ່ວຍສາອາກອນ.

- ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງຊາດ.

- ຮ່າງຂໍ້ກຳນົດວ່າດ້ວຍແບບແຜນວິທີເຮັດວຽກ, ຂໍ້ກຳນົດວ່າດ້ວຍລະບຽບການຄຸ້ມຄອງລັດຖະກອນຂອງຂະແໜງການເງິນ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ.

(ແຜນການເຄື່ອນໄຫວລະອຽດໄດ້ຄັດຕິດມາພ້ອມນີ້)

(3). ວຽກງານປະສານສົມທົບກັບທ້ອງຖິ່ນ:

ຄະນະຮັບຜິດຊອບວຽກງານຫັນສາມສາຍຕັ້ງ ຂອງກະຊວງການເງິນ ປະສານສົມທົບກັບທ້ອງຖິ່ນທີ່ກ່ຽວຂ້ອງຢ່າງສະໜິດແໜ້ນ ເພື່ອດຳເນີນວຽກງານຕ່າງໆ ດັ່ງລຸ່ມນີ້:

- ເກັບກຳຂໍ້ມູນດ້ານຕ່າງໆ ຢ່າງລະອຽດ, ວາງແຜນ ແລະ ປຶກສາຫາລື ກ່ຽວກັບການແບ່ງປັນ ແລະ ບັນຈຸສັບຊ້ອນພະນັກງານ, ງົບປະມານ ແລະ ວັດຖຸອຸປະກອນຕ່າງໆ ລະຫວ່າງພະແນກການເງິນແຂວງ, ນະຄອນຫຼວງກັບສາມສາຍຕັ້ງຢ່າງເໝາະສົມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະບ່ອນ.

- ຈັດຕັ້ງການເຜີຍແຜ່ແນະນຳເນື້ອໃນຈິດໃຈຂອງເອກະສານຕ່າງໆ ແລະ ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ ກ່ຽວກັບການຫັນສາມວຽກງານຂຶ້ນກັບການຄຸ້ມຄອງຕາມສາຍຕັ້ງຂອງກະຊວງການເງິນຢູ່ໃນຈຸດທົດລອງກ່ອນ, ຫຼັງຈາກນັ້ນຈຶ່ງສືບຕໍ່ຜັນຂະຫຍາຍອອກໄປທົ່ວປະເທດ.

- ດຳເນີນການກຳນົດຕຳແໜ່ງງານຂອງສາມສາຍຕັ້ງຄືນໃໝ່ ເພື່ອໃຫ້ສອດຄ່ອງກັບໜ້າທີ່ວຽກງານຕົວຈິງ.

- ຂຶ້ນແຜນຝຶກອົບຮົມ, ບຳລຸງ, ຍົກລະດັບ ແລະ ສ້າງພະນັກງານສາມສາຍຕັ້ງ ກໍຄືພະນັກງານໃນທົ່ວຂະແໜງການເງິນ ເພື່ອຮອງຮັບການຈັດຕັ້ງປະຕິບັດວຽກງານທີ່ຖືກມອບໝາຍໃຫ້ສຳເລັດໃນແຕ່ລະໄລຍະ.

- ກະກຽມຂໍ້ມູນການກໍ່ສ້າງພື້ນຖານໂຄງລ່າງ ໃຫ້ແກ່ສາມສາຍຕັ້ງ ເພື່ອເອົາເຂົ້າແຜນການໃນສະເພາະໜ້າ ແລະ ຍາວນານ.

3. ບາດກ້າວດຳເນີນການຫັນຕົວຈິງ:

(1) ບາດກ້າວທີໜຶ່ງ (ບາດກ້າວເຮັດທົດລອງ):

ດຳເນີນການຄັດເລືອກເປົ້າໝາຍເຮັດທົດລອງ ໂດຍອີງໃສ່ທ້ອງຖິ່ນທີ່ມີສະພາບແວດລ້ອມ ແລະ ເງື່ອນໄຂລະດັບການຂະຫຍາຍຕົວດີ, ປານກາງ ແລະ ຫຍຸ້ງຍາກ ແລ້ວຈັດລຽງວຽກລະອຽດທີ່ຈະຫັນເປັນສາຍຕັ້ງ ຊຶ່ງເລີ່ມປະຕິບັດ ແຕ່ວັນທີ 1/10/2007 ເປັນຕົ້ນໄປ ໂດຍຈະປະຕິບັດໄປຕາມ 2 ຮູບແບບ ດັ່ງນີ້ :

- **ຮູບແບບ** 1 (ຮູບແບບທົດລອງ): ຫັນເອົາວຽກທັງໝົດຂອງສາມສາຍຕັ້ງ (ວຽກວິຊາສະເພາະ, ການຈັດຕັ້ງ-ບຸກຄະລາກອນ, ງົບປະມານ-ການເງິນ ແລະ ວັດຖຸອຸປະກອນຕ່າງໆ) ໄປສູ່ການຄຸ້ມຄອງຕາມສາຍຕັ້ງຢ່າງເຕັມຮູບແບບ. ສຳລັບທ້ອງຖິ່ນໃດ ທີ່ມີສະຖານທີ່ເຮັດວຽກຂອງສາມສາຍຕັ້ງຢູ່ບ່ອນດຽວກັບພະແນກການເງິນແຂວງ, ນະຄອນຫຼວງ, ຫ້ອງການ ການເງິນເມືອງນັ້ນ, ງົບປະມານບໍລິຫານ ແລະ ງົບປະມານອື່ນໆ ທີ່ຈຳເປັນກໍອາດໃຊ້ຮ່ວມກັນກໍໄດ້.

- **ຮູບແບບ** 2 (ຮູບແບບເຮັດທົ່ວໄປ): ຫັນບາງດ້ານໄປສູ່ການຄຸ້ມຄອງຕາມສາຍຕັ້ງເຊັ່ນ: ວຽກວິຊາສະເພາະ, ການຈັດຕັ້ງ-ບຸກຄະລາກອນ ແລະ ຄັງເງິນເດືອນ, ເງິນນະໂຍບາຍ. ສ່ວນເງິນບໍລິຫານ, ດັດສົມສິ່ງເສີມ, ພາຫະນະອຸປະກອນ ແລະ ອື່ນໆ ຍັງນຳໃຊ້ຮ່ວມກັບພະແນກການເງິນທ້ອງຖິ່ນ.

ການສະຫຼຸບຖອດຖອນບົດຮຽນການຫັນບາດກ້າວທີ່ 1 ອາດຈະດຳເນີນເປັນ 2 ຄັ້ງ ຄື: ໃນເດືອນ 4 ແລະ ເດືອນ 8/2008.

- <u>ບັນດາແຂວງເປົ້າໝາຍທີ່ຈະເຮັດທົດລອງຫັນເປັນສາຍຕັ້ງ ຕາມຮູບແບບທີ່ 1</u>:

**ກ. ພາສີເຮັດຢູ່ 04 ຈຸດຄື:**

(1). ພາສີເຂດຫຼວງນໍ້າທາລວມມີ: ແຂວງຫຼວງນໍ້າທາ, ບໍ່ແກ້ວ, ອຸດົມໄຊ ແລະ ແຂວງຜົ້ງສາລີ.

(2). ພາສີເຂດນະຄອນຫຼວງວຽງຈັນ.

(3). ພາສີເຂດພາກກາງ ປະກອບມີ ແຂວງສະຫວັນນະເຂດ.

(4). ພາສີເຂດຈຳປາສັກ (4 ແຂວງພາກໃຕ້).

**ຂ. ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ເຮັດຢູ່ 5 ຈຸດຄື:**

(1). ແຂວງຫຼວງນໍ້າທາ.

(2). ແຂວງຫຼວງພະບາງ.

(3). ນະຄອນຫຼວງວຽງຈັນ.

(4). ແຂວງສະຫວັນນະເຂດ.

(5). ແຂວງຈຳປາສັກ.

- ສ່ວນບັນດາແຂວງທີ່ຍັງເຫຼືອ ໃຫ້ດຳເນີນຕາມຮູບແບບທີ່ 2.

ຕາຕະລາງການຄັດເລືອກເປົ້າໝາຍ ແລະ ການຈັດວາງຕາມຮູບແບບລະອຽດມີດັ່ງນີ້.

| ແຂວງເປົ້າໝາຍ | ພາສີ | | ສ່ວຍສາອາກອນ | | ຄັງເງິນແຫ່ງຊາດ | | ໝາຍເຫດ |
|---|---|---|---|---|---|---|---|
| | ແບບ 1 | ແບບ 2 | ແບບ 1 | ແບບ 2 | ແບບ 1 | ແບບ 2 | |
| - ນະຄອນຫຼວງວຽງຈັນ | ✓ | | ✓ | | ✓ | | |
| - ຜົ້ງສາລີ | ✓ | | | ✓ | | ✓ | |
| - ຫລວງນ້ຳທາ | ✓ | | ✓ | | ✓ | | |
| - ອຸດົມໄຊ | ✓ | | | ✓ | | ✓ | |
| - ບໍ່ແກ້ວ | ✓ | | | ✓ | | ✓ | |
| - ຫລວງພະບາງ | ✓ | | ✓ | | ✓ | | |
| - ຫົວພັນ | | ✓ | | ✓ | | ✓ | |
| - ໄຊຍະບູລີ | | ✓ | | ✓ | | ✓ | |
| - ຊຽງຂວາງ | | ✓ | | ✓ | | ✓ | |
| - ວຽງຈັນ | | ✓ | | ✓ | | ✓ | |
| - ບໍລິຄຳໄຊ | | ✓ | | ✓ | | ✓ | |
| - ຄຳມ່ວນ | | ✓ | | ✓ | | ✓ | |
| - ສະຫວັນນະເຂດ | ✓ | | ✓ | | ✓ | | |
| - ສາລະວັນ | ✓ | | | ✓ | | ✓ | |
| - ເຊກອງ | ✓ | | | ✓ | | ✓ | |
| - ຈຳປາສັກ | ✓ | | ✓ | | ✓ | | |
| - ອັດຕະປື | ✓ | | | ✓ | | ✓ | |

* **ໝາຍເຫດ:** ສຳລັບທ້ອງຖິ່ນ ທີ່ໄດ້ດຳເນີນຕາມຮູບແບບທີ່ 2 ຖ້າມີເງື່ອນໄຂຄົບຖ້ວນ ແລະ ມີຄວາມກຽມພ້ອມແລ້ວ ກໍ່ສາມາດຫັນໄປດຳເນີນຕາມຮູບແບບທີ່ 1 ໂດຍບໍ່ລໍຖ້າໃຫ້ໝົດກຳນົດຂອງບາດກ້າວທີ່ 1 ກໍໄດ້.

(2) **ບາດກ້າວທີ່ສອງ** (ບາດກ້າວຈັດຕັ້ງຜັນຂະຫຍາຍ): ພາຍຫລັງມີການສະຫຼຸບຖອດຖອນບົດຮຽນກ່ຽວກັບການຫັນ 3 ວຽກງານໄປສູ່ສາຍຕັ້ງໃນບາດກ້າວທີ່ 1 ສຳເລັດແລ້ວ, ໃຫ້ສືບຕໍ່ເກັບກຳຂໍ້ມູນ ແລະ ວາງແຜນຈັດຕັ້ງປະຕິບັດບາດກ້າວທີ່ 2 ຊຶ່ງຈະເລີ່ມຕົ້ນແຕ່ ວັນທີ 1/10/2008 ເປັນຕົ້ນໄປ.

(3) **ບາດກ້າວທີ່ສາມ** (ບາດກ້າວສືບຕໍ່ຈັດຕັ້ງຜັນຂະຫຍາຍໃຫ້ສຳເລັດ): ເປັນບາດກ້າວສືບຕໍ່ຈັດຕັ້ງຜັນຂະຫຍາຍທຸກວຽກງານ ໄປສູ່ບັນດາແຂວງທີ່ຍັງເຫຼືອໃຫ້ສຳເລັດໃນຂອບເຂດທົ່ວປະເທດ.

## III. ການຈັດຕັ້ງປະຕິບັດ.

- ມອບໃຫ້ຄະນະຮັບຜິດຊອບການຫັນໄປສູ່ການຄຸ້ມຄອງຕາມສາຍຕັ້ງ, ສາມກົມສາຍຕັ້ງສົມທົບກັບອົງການປົກຄອງທ້ອງຖິ່ນ, ພະແນກການເງິນແຂວງ, ນະຄອນຫຼວງ ແລະຫ້ອງການການເງິນເມືອງ ຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ສອດຄ່ອງກັບຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 35/ນຍ, ລົງວັນທີ 06 ກັນຍາ 2007 ແລະ ຄຳແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບນີ້ຢ່າງມີຜົນສຳເລັດເປັນຢ່າງດີ.

- ຜ່ານການຈັດຕັ້ງປະຕິບັດຕົວຈິງ ຫາກມີບັນຫາຂໍ້ຫຍຸ້ງຍາກປະການໃດ ໃຫ້ລາຍງານຂໍຄຳເຫັນຊີ້ນຳ ຈາກລັດຖະມົນຕີວ່າການກະຊວງການເງິນ ແລະ ຂັ້ນເທິງຢ່າງທັນການ, ພ້ອມດຽວກັນນັ້ນ ກໍໃຫ້ສະຫຼຸບລາຍງານຜົນໄດ້ຮັບ ແລະ ຄວາມຄືບໜ້າໃນການປະຕິບັດວຽກງານດັ່ງກ່າວ ເປັນແຕ່ລະໄລຍະຢ່າງຕໍ່ເນື່ອງ ຄື ທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ.

ລັດຖະມົນຕີວ່າການກະຊວງການເງິນ,

ກະຊວງການເງິນ

ລັດຖະມົນຕີ

ສົມດີ ດວງດີ